**ບົດຄວາມເຜີຍແຜ່ຜ່ານສື່ຕ່າງໆ**

**5 ຄວາມຮູ້ພື້ນຖານກ່ອນເຂົ້າມາລົງທຶນໃນຕະຫຼາດຫຼັກຊັບ**

**ຮຽບຮຽງໂດຍ: ສຸລິຍາ ໝື່ນວິເສດ**

**ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ທີ່ຈິງແລ້ວ ການລົງທຶນໃນຫຼັກຊັບ ຫຼື ເຄື່ອງມືທາງການເງິນຕ່າງໆ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຫຼື ບໍ່ຈົດທະບຽນໃນຕະຫຼາດຫຼັກຊັບ ຜູ້ລົງທຶນແມ່ນມີຄວາມຈຳເປັນທີ່ຈະຕ້ອງມີຄວາມເຂົ້າໃຈ ແລະ ຄວາມຮູ້ກ່ຽວກັບການລົງທຶນໃນຕະຫຼາດທຶນໃນລະດັບດີພໍສົມຄວນ ເພື່ອຮັບປະກັນໄດ້ການຕັດສິນໃຈລົງທຶນທີ່ຖືກຕ້ອງ ແລະ ສາມາດຫຼຸດຜ່ອນຄວາມສ່ຽງໄດ້. ເຖິງຢ່າງໃດກໍ່ດີ ຜູ້ລົງທຶນທ່ານໃດທີ່ຕ້ອງການເຂົ້າມາມີສ່ວນຮ່ວມໃນຕະຫຼາດທຶນແມ່ນຢ່າງໜ້ອຍຕ້ອງມີຄວາມຮູ້ພື້ນຖານ 5 ຢ່າງ ດັ່ງນີ້:

1. **ຮູ້ຈັກຕະຫຼາດຫຼັກຊັບແມ່ນຫຍັງ?** ຕະຫຼາດຫຼັກຊັບແມ່ນສະຖານທີ່ແລກປ່ຽນຊື້-ຂາຍຫຼັກຊັບທີ່ຈົດທະບຽນສຳລັບຜູ້ຊື້ ແລະ ຜູ້ຂາຍຫຼັກຊັບ ທີ່ໃຊ້ລະບົບທີ່ມີຄວາມຊັບຊ້ອນ ແລະ ທັນສະໄໝ ຊຶ່ງຈະແຕກຕ່າງກັບການຫຼິ້ນການພະນັນອື່ນໆ ເນື່ອງຈາກວ່າ ຜູ້ຊື້ ແລະ ຜູ້ຂາຍ ຕ້ອງມີຄວາມຮູ້ດ້ານວິຊາການ ກໍ່ຄືຄວາມຮູ້ດ້ານການເງິນ, ດ້ານເສດຖະສາດ ແລະ ຄວາມຮູ້ຕ່າງໆທີ່ສາມາດນຳມາພິນິດພິຈາລະນາ ແລະ ຕັດສິນໃຈໃນການລົງທຶນວ່າຈະຊື້ ຫຼື ຈະຂາຍ ຫຼັກຊັບແຕ່ລະປະເພດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ແຕ່ວ່າມີສິ່ງໜຶ່ງທີ່ເຮັດໃຫ້ການລົງທຶນໃນຕະຫຼາດຮຸ້ນ ກັບການຫຼິ້ນການພະນັນແມ່ນ ທຸກໆທຸລະກຳການຊື້-ຂາຍແມ່ນຈະປະກອບໄປດ້ວຍຜູ້ກຳໄລ ແລະ ຜູ້ຂາດທຶນ.
2. **ຕະຫຼາດຫຼັກຊັບແມ່ນຕະຫຼາດທີ່ມີທັງຜູ້ກຳໄລ ແລະ ຜູ້ຂາດທຶນ** ດັ່ງທີ່ທ່ານຮູ້ວ່າ ຕະຫຼາດຫຼັກຊັບແມ່ນສະຖານທີ່ຮວບຮວມເງິນລົງທຶນມະຫາສານຂອງຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ປະກອບກັບມີມຸມມອງໃນການວິເຄາະຕະຫຼາດທີ່ແຕກຕ່າງກັນຂອງຜູ້ລົງທຶນ ໝາຍຄວາມວ່າເມື່ອໃດທີ່ມີຜູ້ຂາຍຫຼັກຊັບກໍ່ຈະມີຜູ້ຊື້ຫຼັກຊັບເຊັ່ນດຽວກັນ. ໃນເງື່ອນໄຂທີ່ຜູ້ລົງທຶນບໍ່ມີການວິເຄາະຕະຫຼາດທີ່ຖືກຕ້ອງໝົດທຸກຄົນຈຶ່ງເຮັດໃຫ້ໃນຕະຫຼາດຈະມີຜູ້ກຳໄລ ແລະ ຜູ້ຂາດທຶນ ດັ່ງນັ້ນ ມັນຈຶ່ງຮຽກຮ້ອງໃຫ້ຜູ້ລົງທຶນຕ້ອງມີຄວາມຮູ້ຢ່າງເລິກເຊິ່ງກ່ຽວກັບການລົງທຶນໃນຕະຫຼາດທຶນໃນລະດັບດີພໍສົມຄວນ ເພື່ອກະຈາຍ ຫຼື ຫຼຸດຄວາມສ່ຽງທີ່ຕິດພັນ.
3. **ສິ່ງໃດທີ່ສາມາດກະທົບລາຄາໃຫ້ຂຶ້ນລົງໄດ້?** ຕາມການປະຕິບັດຕົວຈິງແລ້ວ ມີຫຼາຍປັດໄຈທີ່ສາມາດກຳນົດລາຄາຮຸ້ນ ຫຼື ຫຼັກຊັບທີ່ຈົດທະບຽນໃນຕະຫຼາດຫຼັກຊັບໄດ້ ເປັນຕົ້ນແມ່ນ ສື່ສິ່ງພິມ, ຄວາມຄິດເຫັນຂອງວິຊາການທີ່ມີຊື່ສຽງ ແລະ ຍອມຮັບໃນວົງການການເງິນ, ວິກິດການທຳມະຊາດ, ຄວາມບໍ່ສະຫງົບທາງດ້ານການເມືອງ ແລະ ສັງຄົມ ລວມໄປເຖິງວິກິດການທາງການເງິນພາຍໃນປະເທດ, ຂົງເຂດ ແລະ ພາກພື້ນ ແລະ ອື່ນໆ. ຍ້ອນຜົນກະທົບຂອງປັດໄຈຕ່າງໆແມ່ນ ສາມາດເຮັດໃຫ້ແນວຄວາມຄິດຂອງຜູ້ລົງທຶນມີການປ່ຽນແປງ ແລະ ເຮັດໃຫ້ການເໜັງຕີງຂອງດັດສະນີຕະຫຼາດຫຼັກຊັບໄປຢູ່ 2 ທິດທາງ ຄືຕະຫຼາດກະທິງ (ລາຄາຮຸ້ນສ່ວນໃຫຍ່ເໜັງຕີງໃນທິດບວກ) ແລະ ຕະຫຼາດໝີ (ລາຄາຮຸ້ນສ່ວນໃຫຍ່ເໜັງຕີງໃນທິດລົບ) ຫຼື ເວົ້າໄດ້ອີກຢ່າງໜຶ່ງວ່າ ຖ້າມີຈຳນວນຜູ້ຂາຍຫຼາຍກວ່າຜູ້ຊື້ ລາຄາຮຸ້ນຈະຫຼຸດລົງກົງກັນຂ້າມ ຖ້າມີຈຳນວນຜູ້ຊື້ຫຼາຍກວ່າຜູ້ຂາຍ ລາຄາຮຸ້ນຈະເພີ່ມຂຶ້ນ ຕາມກົນໄກຕະຫຼາດ.

4. **ເປັນຫຍັງຮຸ້ນໃນຕະຫຼາດຫຼັກຊັບຈຶ່ງມີຄວາມຫຍຸ້ງຍາກໃນການກຳນົດລາຄາ?** ການກຳນົດລາຄາຂອງຮຸ້ນທີ່ຈົດທະບຽນໃນຕະຫຼາດຫຼັກຊັບແມ່ນມີຄວາມຫຍຸ້ງຍາກ ແລະ ສັບສົນ ໃນຄວາມເປັນຈິງແລ້ວ ຄຳຖາມສ່ວນໃຫຍ່ທີ່ຜູ້ລົງທຶນມັກຕັ້ງຂຶ້ນມາແມ່ນ ເວລາໃດຄວນສົ່ງຄຳສັ່ງຊື້ຮຸ້ນ, ເວລາໃດຄວນຖືຄອງໄວ້ ແລະ ເວລາໃດສົມຄວນຊື້ຮຸ້ນ. ຜູ້ລົງທຶນບາງຄົນຕັດສິນໃຈຂາຍຮຸ້ນທີ່ຕົນຖືຄອງຢູ່ໄປແລ້ວ ຕໍ່ມາລາຄາຮຸ້ນດັ່ງກ່າວພັດເພີ່ມສູງຂຶ້ນ ນີ້ກໍ່ແມ່ນໜຶ່ງໃນກໍລະນີທີ່ສະແດງໃຫ້ເຫັນວ່າ ຜູ້ລົງທຶນໃນຮຸ້ນບໍ່ໄດ້ວິເຄາະຢ່າງຖີ່ຖ້ວນ ຫຼື ວິເຄາະຖີ່ຖ້ວນແລ້ວ ແຕ່ກໍ່ຍັງມີບາງປັດໃຈທີ່ເຮັດໃຫ້ລາຄາຮຸ້ນດັ່ງກ່າວເພີ່ມສູງຂຶ້ນ. ເຖິງຢ່າງໃດກໍ່ຕາມ ຜູ້ລົງທຶນຄວນພິຈາລະນາ 3 ປັດໄຈພື້ນຖານ ດັ່ງນີ້: 1. ຕ້ອງສາມາດກຳນົດລາຄາຮຸ້ນທີ່ຄວນຈະເປັນຢ່າງຖືກຕ້ອງ, 2. ເຫດການຕ່າງໆທີ່ສາມາດເຮັດໃຫ້ລາຄາຮຸ້ນຕົກຕໍ່າ ແລະ ສຸດທ້າຍ 3. ຕ້ອງມີຄວາມເຂົ້າໃຈຕໍ່ຂະບວນການຕັດສິນໃຈຂອງຜູ້ລົງທຶນ.
5. **ເວລາໃດຄວນຊື້-ຂາຍ ຫຼັກຊັບ?** ມີສອງສິ່ງທີ່ຜູ້ລົງທຶນຕ້ອງຕັດສິນໃຈແມ່ນ ເວລາໃດຄວນຊື້ ຫຼື ເວລາໃດຄວນຂາຍ. ເວລາທີ່ຄວນຊື້ນັ້ນ ແມ່ນເວລາທີ່ຜູ້ລົງທຶນອື່ນແມ່ນມີແນວຄິດດ້ານລົບຕໍ່ຕະຫຼາດທຶນກົງກັນຂ້າມ ເວລາທີ່ຄວນຂາຍ ແມ່ນເວລາທີ່ຜູ້ລົງທຶນຕ່າງໆແມ່ນມີແນວຄວາມຄິດດ້ານບວກຕໍ່ກັບຕະຫຼາດທຶນ ຊຶ່ງເພີ່ມທະວີຄວາມຕ້ອງການຊື້ຮຸ້ນໃນຕະຫຼາດຫຼັກຊັບໃຫ້ຫຼາຍຂຶ້ນ. ຕົວຢ່າງ: ຫຼັງຈາກທີ່ລາຄາຮຸ້ນຂອງບໍລິສັດ ກ ໄດ້ຕົກລົງ 30%, 40% ຫຼື ຫຼາຍກວ່ານັ້ນ ຄຳຖາມທີ່ຄວນຄຳນຶງເຖິງແມ່ນຍ້ອນສາເຫດອັນໃດ? ເປັນຫຍັງລາຄາຮຸ້ນຈຶ່ງຕົກລົງຫຼາຍແບບນັ້ນ?, ຮຸ້ນຂອງບໍລິສັດອື່ນໆໃນຂະແໜງອຸດສາຫະກຳດຽວກັນມີການປ່ຽນແປງຄືແນວນີ້ບໍ່? ຖ້າວ່າຮຸ້ນຂອງບໍລິສັດອື່ນໆໃນຂະແໜງດຽວກັນ ຫຼື ໃນຂະແໜງອື່ນໆ ກໍ່ຫຼຸດລົງເຊັ່ນດຽວກັນ ນັ້ນໝາຍເຖິງເສດຖະກິດໂດຍລວມແມ່ນບໍ່ສ້າງປັດໄຈໃຫ້ມີການສ້າງຄວາມສາມາດໃນການເພີ່ມກຳໄລຂອງບໍລິສັດໄດ້ ແຕ່ຖ້າລາຄາຮຸ້ນບໍລິສັດອື່ນໆແມ່ນຍັງສາມາດຂະຫຍາຍຕົວໄດ້ ນັ້ນສະແດງວ່າບໍລິສັດ ກ ຕ້ອງມີບັນຫາໃດໜຶ່ງຢ່າງແນ່ນອນ ດັ່ງນັ້ນ ຜູ້ຖືຮຸ້ນກໍ່ຄວນຂາຍຮຸ້ນດັ່ງກ່າວໄວເທົ່າທີ່ຈະໄວໄດ້.

ດັ່ງນັ້ນ, ກ່ອນທີ່ຈະຕັດສິນໃຈລົງທຶນໃນຫຼັກຊັບປະເພດຕ່າງໆ ຜູ້ລົງທຶນຄວນກຳໄດ້ລັກສະນະສະເພາະ ແລະ ພິເສດຂອງຫຼັກຊັບປະເພດນັ້ນໆ. ພ້ອມນັ້ນ, ຕ້ອງມີແຜນ ແລະ ຍຸດທະສາດຢ່າງຄັກແນ່ໃນການລົງທຶນ ໂດຍສະເພາະທີ່ສຳຄັນທີ່ສຸດແມ່ນ ການບໍລິຫານຄວາມສ່ຽງ ແລະ ຄວາມສາມາດໃນການຍອມຮັບຄວາມສ່ຽງ ເພື່ອຮັບປະກັນຜົນຕອບແທນຈາກການລົງທຶນ.